**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ເລກທີ.2646/ທກ.ຂ.ວ.ດ

ນະຄອນຫຼວງວຽງຈັນ, ວັນທີ 17 ຕຸລາ 2023

## ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ຮັບອະນຸມັດງົບປະມານ ລົງທຶນຂອງລັດ ປະຈໍາປີ 2023: ໂຄງການ ຂະຫຍາຍລະບົບຈົດໝາຍເອເລັກໂຕຣນິກ ຂອງ ລັດຖະບານ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທີ່ ເໝາະສົມ ທີ່ດໍາເນີນກິດຈະການດ້ານການອອກແບບ, ຕິດຕັ້ງ ແລະ ດໍາເນີນການພັດທະນາລະບົບຈົດໝາຍເອເລັກ ໂຕຣນິກ ຫຼື ລະບົບຊອບແວທີ່ໃກ້ຄຽງ ເຂົ້າຮ່ວມປະມູນ. ກໍານົດມອບຮັບສິນຄ້າ 21ວັນ. ພາຍຫຼັງເຈົ້າຂອງ ໂຄງການອອກເອກະສານສັ່ງຊື້;
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກ ບໍລິສັດທີ່ມີຄຸນວຸດທິເໝາະສົມ, ທີ່ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມ ກົດໝາຍທີ່ກ່ຽວພັນກັບການພັດທະນາລະບົບຈົດໝາຍເອເລັກໂຕຣນິກ ຫຼື ລະບົບຊອບແວທີ່ໃກ້ຄຽງ;
4. ບໍລິສັດໃດ ທີ່ຕ້ອງການເຂົ້າຮ່ວມປະມູນແມ່ນສາມາດຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ ກະຊວງເຕັກ ໂນໂລຊີ ແລະ ການສື່ສານ (ເຂດຮົ່ວ ສບຍ), ເມືອງ: ຈັນທະບູລີ,ນະຄອນຫລວງວຽງຈັນ, ເບີໂທຕິດຕໍ່: 021 316600, 020 77668669, 020 59398896 ເລີ່ມຂາຍຊອງແຕ່ວັນທີ 16 ຕຸລາ 2023 ເຖິງວັນທີ 06 ພະຈິກ 2023 (ໃນໂມງລັດຖະການ), ໃນລາຄາ 2,500,000 ກີບ/ຊອງ, ຈໍານວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການ ສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 07 ພະຈິກ 2023 ທີ່ຫ້ອງ 208 ຊັ້ນ 2, ກະຊວງເຕັກໂນ ໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ,ນະຄອນຫລວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າ ເວລາທີ່ກໍານົດໄວ້ແມ່ນຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 13:30 ໂມງ ຂອງ ວັນທີ 07 ພະຈິກ 2023 ໂດຍສ່ອງໜ້າຄະນະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄໍ້າປະກັນການປະມູນ ດ້ວຍເງິນສົດ, ໜັງສືຄໍ້າປະກັນອອກໂດຍທະນາຄານ, ເຊັກ(ວີຊາ) ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ ຈຶ່ງແຈ້ງມາຍັງບໍລິສັດຫ້າງຮ້ານທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຮອງ ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ຫ້ອງການ

ອະລະໄຊ ດາລາລອຍ